ພິທີລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືພັດທະນາ ແລະ ຄວາມເປັນໄປໄດ້ໃນການລົງທຶນ ໃນເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ



ໃນວັນທີ 10 ທັນວາ 2020 ໄດ້ມີ ພິທີລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືພັດທະນາ ແລະ ຄວາມເປັນໄປໄດ້ໃນການລົງທຶນ ສ້າງສາງເກັບນ້ຳມັນ ໃນເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ ລະຫວ່າງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດ ມູຫິບບາ ເອັນຈິເນຍລິ້ງ (M) BHD ແລະ ທ່ານ ອຸເດດ ສຸວັນນະວົງ ຊຶ່ງ ໃຫ້ກຽດເຂົ້າໂດຍ ທ່ານ ອາລຸນແກ້ວ ກິດຕິຄຸນ, ປະທານກຳມະການ ຍຸດທະສາດ ແລະ ການວາງແຜນ ບໍລິສັດ PTL Holding ຈຳກັດ, ທ່ານ ອຸເດດ ສຸວັນນະວົງ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ທ່ານ ຈັນທອນ ສິດທິໄຊ, ປະທານສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ທ່ານ ນາງ ອານິດາ ສຸວັນນະວົງ ຜູ້ຈັດການ ບໍລິສັດ ມູຫິບບາ ເອັນຈິເນຍລິ້ງ ລາວ, ທ່ານ ປາຣິຍາ ນວນທະສິງ ຜູ້ອຳນວຍການຝ່າຍພັດທະນາທຸລະກິດ ບໍລິສັດ PTL Holding ຈຳກັດ ພ້ອມທັງບັນດາແຂກຜູ້ມີກຽດທຸກໆຫຼາຍພາກສ່ວນກໍ່ໄດ້ໃຫ້ກຽດເຂົ້າຮ່ວມ.

ໃນການຮ່ວມມືກັນຄັ້ງນີ້ແມ່ນຈະໄດ້ລິເລີ່ມສຶກສາຄວາມເປັນໄປໄດ້ ໃນການລົງທຶນພັດທະນາສ້າງສາງນ້ຳມັນ ໃນເນື້ອທີ່ປະມານ 20 ເຮັກຕາ ເຊິ່ງຈະຢູ່ໃນເຂດ ວຽງຈັນ ໂລຊິດສຕິກ ພາກ ຫຼື ໃນເຂດເສດຖະກິດພິເສດ ເພື່ອຮອງຮັບນ້ຳມັນໄດ້ ເຖິງ 150ລ້ານລິດ. ພິທີດັ່ງກ່າວໄດ້ຈັດຂຶ້ນ ທີ່ສຳນັກງານໃຫຍ່ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

